ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ ອັດຕະປື

ເລກທີ 19 /ຈຂ.ອປ
ວັນທີ 17 ທັນວາ 2018

# ຄໍາສັ່ງແນະນໍາ

ວ່າດ້ວຍ ການເພີ່ມທະວີ ເອົາໃຈໃສ່ໃນການປະຕິບັດ
ດໍາລັດ 348/ລບ ແລະ ບົດແນະນໍາ ສະບັບເລກທີ 0830/ກປ.

**ເຖິງ:** ທ່ານເຈົ້າເມືອງ 05ເມືອງ ແລະ ທ່ານຫົວໜ້າພະແນກການອ້ອມຂ້າງ ແຂວງອັດຕະປື.
**ເລື່ອງ:** ມາດຕະການຈັດຕັ້ງປະຕິບັດກ່ຽວກັບຜັນຂະຫຍາຍ ດໍາລັດ 348/ລບ ແລະ ບົດແນະນໍາ ສະບັບເລກທີ 0830/ກປ

- ອີງຕາມ ກົດໝາຍການປົກຄອງທ້ອງຖິ່ນ ແຫ່ງ ສປປລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ.
- ອີງຕາມ ຂໍ້ຕົກລົງຂອງ ທ່ານເຈົ້າແຂວງ ສະບັບເລກທີ 1673/ຈຂ.ອປ, ລົງວັນທີ 12 ທັນວາ 2018 ວ່າດ້ວຍ ການແຕ່ງ ຕັ້ງຄະນະຮັບຜິດຊອບຈັດຕັ້ງຜັນຂະຫຍາຍ ດໍາລັດ 348/ລບ ແລະ ບົດແນະນໍາສະ ບັບເລກທີ 0830/ກປ.

ເພື່ອເຮັດໃຫ້ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມາດຕະຖານພື້ນທຸກ ແລະ ມາດຕະຖານພັດທະນາ ໃຫ້ມີຄວາມຮັບຮູ້ເຂົ້າໃຈ ແລະ ປະຕິບັດເປັນເອກະພາບກັນໃນຂອບເຂດທົ່ວແຂວງ, ເນື່ອງຈາກວ່າໃນບົດແນະນໍາ ສະບັບເລກທີ 0830/ກປ, ລົງວັນທີ 6 ເມສາ 2018 ໄດ້ມອບຄວາມຮັບຜິດຊອບໃຫ້ທ້ອງຖິ່ນກໍານົດບັນດາເງື່ອນໄຂບາງດ້ານເປັນສະເພາະຂອງແຂວງເພື່ອສອດຄ່ອງກັບສະພາບຄວາມເປັນຈິງພາຍໃນແຂວງ. ເຈົ້າແຂວງອັດຕະປື ອອກຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດ ດໍາລັດສະບັບເລກທີ 348/ລບ, ລົງວັນທີ16 ພະຈິກ 2017 ວ່າດ້ວຍ ມາດຕະຖານພື້ນທຸກ ແລະ ມາດຕະຖານພັດທະນາ, ບົດແນະນໍາຂອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 830/ກປ, ລົງວັນທີ 6 ເມສາ 2018 ວ່າດ້ວຍ ການຈັດຕັ້ງປະຕິບັດດໍາລັດ ວ່າດ້ວຍ ມາດຕະຖານພື້ນທຸກ ແລະ ມາດຕະຖານພັດທະນາ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຖືກຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການ ແລະ ພ້ອມທັງໄປເຜີຍແຜ່ໃຫ້ແກ່ພະນັກງານຂອງຕົນ, ໄດ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ເພື່ອເຮັດໃຫ້ວຽກການເຜີຍແຜ່ ດໍາລັດ 348/ລບ, ລົງວັນທີ 16 ພະຈິກ 2017 ແລະ ບົດແນະນໍາ 830/ກປ, ລົງວັນທີ 6 ເມສາ2018 ເປັນຂະບວນການ.

ເຈົ້າແຂວງອັດຕະປືອອກຄຳສັ່ງ:

1. ໃຫ້ທຸກທ່ານທີ່ມີລາຍຊື່ໃນຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບເລກທີ 1673/ຈຂ.ອປ, ລົງວັນທີ 12 ທັນວາ 2018,ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຈັດຕັ້ງຜັນຂະຫຍາຍ ດຳລັດເລກທີ 348/ລບ ບົດແນະນຳ 830/ກປ ກ່ຽວກັບມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ເປັນເຈົ້າການພ້ອມກັນເຊື່ອມຊຶມເອກະສານດັ່ງກ່າວ, ພ້ອມທັງນຳໄປເຜີຍແຜ່ໃຫ້ແກ່ພະນັກງານຂອງຕົນ.

2. ເພື່ອໃຫ້ຄະນະພັກ,ອົງການປົກຄອງທຸກຂັ້ນ, ພະແນກການ,ຂະແໜງການ ແລະ ຫ້ອງການ ມີຄວາມຮັບຮູ້, ເຂົ້າໃຈເນື້ອໃນຂອງ ດຳລັດ 348/ລບ, ບົດແນະນຳ 0830/ກປ, ໄດ້ນຳໄປຈັດຕັ້ງຜັນຂະຫຍາຍເປັນເອກະພາບຕາມພາລະບົດບາດໜ້າທີ່ຂອງແຕ່ລະພາກສ່ວນ ເຫັນໄດ້ຄວາມແຕກຕ່າງລະຫວ່າງ ດຳລັດ 309/ນຍ ແລະ ດຳລັດ 348/ລບ, ເຊິ່ງເນື້ອໃນຈິດໃຈຂອງ ດຳລັດ 348/ລບ ແມ່ນໄດ້ຍົກລະດັບດ້ານການພັດທະນາຂອງ ດຳລັດ 309/ນຍ, ເປັນພື້ນຖານ ແລະ ບ່ອນອີງໃນການຕີລາຄາສະພາບຄວາມເປັນຈິງຂອງຄອບຄົວ, ຂອງບ້ານ ແລະ ເມືອງຕາມມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ແລະ ເປັນພື້ນຖານກຳນົດເນື້ອໃນນຳພາຂອງພັກ ແລະ ເນື້ອໃນການພັດທະນາຂອງຄອບຄົວ, ບ້ານ, ເມືອງ ສຳລັບຊຸມປີຕໍ່ໜ້າ (ຮັບໃຊ້ກອງປະຊຸມໃຫຍ່ 3 ຂັ້ນຂອງພັກ).

3. ເພື່ອບຳລຸງສ້າງຄະນະຮັບຜິດຊອບ, ຄະນະປະສານງານ ແລະ ກອງເລຂາ ຢູ່ຂັ້ນແຂວງ, ຂັ້ນເມືອງ ກາຍເປັນຄູຝຶກ, ເປັນເສນາທິການໃຫ້ແກ່ການນຳຂັ້ນແຂວງ, ຂັ້ນເມືອງໃນການຜັນຂະຫຍາຍ, ຈັດຕັ້ງປະຕິບັດ ດຳລັດ 348/ລບ, ບົດແນະນຳ 0830/ກປ ເຂົ້າສູ່ວຽກຕົວຈິງຂອງທ້ອງຖິ່ນ ຄາດໝາຍຂອງການສ້າງຄູຝຶກຂັ້ນແຂວງໃຫ້ໄດ້ 10 ຄົນຂຶ້ນໄປ ແລະ ເມືອງທົດລອງໃຫ້ໄດ້ 6 ຄົນຂຶ້ນໄປ.

4. ເພື່ອເຮັດໃຫ້ປະຊາຊົນ ກໍຄືຄອບຄົວຮັບຮູ້ເຂົ້າໃຈວ່າການພັດທະນາ (ເປົ້າໝາຍແມ່ນສ້າງຄອບຄົວ)ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ກ້າວຂຶ້ນເປັນຄອບຄົວພັດທະນາ ແລະ ເປັນເຈົ້າການເຂົ້າຮ່ວມຈັດຕັ້ງປະຕິບັດນັບແຕ່ຂອດການຕີລາຄາສະພາບຄວາມເປັນຈິງຂອງຄອບຄົວຕົນເອງ. ຕາມມາດຕະຖານຄອບຄົວພົ້ນທຸກ ແລະ ມາດຕະຖານຄອບຄົວພັດທະນາ, ມີຈິດໃຈເສີມຂະຫຍາຍຈຸດດີ ກໍຄືມາດຕະຖານທີ່ບັນລຸ ມີທິດທາງແກ້ໄຂຈຸດອ່ອນກໍຄື: ມາດຕະຖານທີ່ບໍ່ບັນລຸໃຫ້ສຳເລັດພາຍໃນກຳນົດເວລາອັນແນ່ນອນ.

5. ຜ່ານການດຳເນີນຄັ້ງນີ້ ໃຫ້ໄດ້ຂໍ້ມູນເພື່ອເປັນພື້ນຖານໃຫ້ແກ່ການກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ແລະ ສ້າງໄດ້ຖານຂໍ້ມູນມາດຕະຖານຕາມ ດຳລັດ 348/ລບ ທີ່ເປັນລະບົບນັບແຕ່ຂັ້ນຄອບຄົວຂຶ້ນມາ ຖອດຖອນໄດ້ບົດຮຽນ ເພື່ອປັບປຸງເນື້ອໃນກໍຄື ວິທີການດຳເນີນໃຫ້ສອດຄ່ອງກັບຈຸດພິເສດຂອງທ້ອງຖິ່ນ.

ເມື່ອໄດ້ຮັບຄຳສັ່ງ/ສະແນະນຳບັບນີ້ແລ້ວ ບັນດາພະແນກການອ້ອມຂ້າງແຂວງ ຕະຫຼອດຮອດຜູ້ລາຍຊື່ຕາມຂໍ້ຕົກລົງຂອງ ທ່ານເຈົ້າແຂວງ ສະບັບເລກທີ 1673/ຈຂ.ອປ, ລົງວັນທີ 12 ທັນວາ 2018 ຈົ່ງພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ເຈົ້າແຂວງ

ແຂວງອັດຕະປື

ເລັດ ໄຊຍະພອນ